ການຊົດໃຊ້ຄວບຄຸມຄວາມເຈັບປວດທັງໝົດ

ໂດຍ ແອວເດີ ເຄັນ ແອັຟ ຣິເຈີດ

ແຫ່ງສາວົກເຈັດສິບ

ໃນຖານະຜູ້ເປັນໝໍຜ່າຕັດ, ຂ້າພະເຈົ້າພົບເຫັນ ວ່າເວລາຂອງຂ້າພະເຈົ້າສ່ວນຫລາຍແມ່ນໃຊ້ໄປໃນ ເລື່ອງທີ່ ກ່ຽວກັບຄວາມເຈັບປວດ. ດ້ວຍຄວາມຈຳເປັນຂ້າພະເຈົ້າຕ້ອງ ໄດ້ສ້າງຄວາມເຈັບປວດດ້ວຍ ການຜ່າຕັດເກືອບທຸກມື້---ແລະ ສ່ວນຫລາຍ ເວລາຂອງຂ້າພະເຈົ້າແມ່ນໃຊ້ເພື່ອພະຍາຍາມຄວບຄຸມ ແລະ ບັນເທົາຄວາມເຈັບປວດ.

ຂ້າພະເຈົ້າໄຕ່ຕອງເຖິງເປົ້າໝາຍຂອງຄວາມເຈັບປວດ. ບໍ່ມີໃຜ ມີຄວາມຄຸ້ມກັນຕໍ່ ຈາກການປະສົບການກັບ ຄວາມເຈັບປວດ. ຂ້າພະເຈົ້າ ໄດ້ເຫັນຜູ້ຄົນຮັບມືກັບຄວາມເຈັບປວດແຕກຕ່າງກັນ. ບາງຄົນຫັນໜີໄປ ຈາກພຣະເຈົ້າດ້ວຍຄວາມຄຽດແຄ້ນ, ແລະ ບາງຄົນຍອມໃຫ້ຄວາມທຸກທໍລະມານພາເຂົາເຈົ້າເຂົ້າໃກ້ ພຣະເຈົ້າຫລາຍຂຶ້ນ.

ດັ່ງດຽວກັບທ່ານ, ຂ້າພະເຈົ້າເອງກໍໄດ້ປະສົບກັບຄວາມເຈັບປວດ. ຄວາມເຈັບປວດເປັນການວັດແທກຂອງ ຂັ້ນຕອນຂອງການປິ່ນປົວ. ສ່ວນຫລາຍມັນຈະສອນເຮົາໃຫ້ມີຄວາມອົດທົນ. ບາງທີເປັນເພາະເຫດນີ້ ເຮົາຈຶ່ງໃຊ້ຄຳທີ່ວ່າ *patient* ເມື່ອກ່າວເຖິງຄົນທີ່ເຈັບປ່ວຍ.

ແອວເດີ ອໍສັນ ແອັຟ ວິດນີ ໄດ້ຂຽນວ່າ:

“ບໍ່ມີຄວາມເຈັບປວດອັນໃດທີ່ເຮົາໄດ້ຮັບ, ບໍ່ມີການທົດສອບ ອັນໃດທີ່ເຮົາປະສົບການຈະສູນເສຍໄປລ້າໆ. ມັນສິດສອນເຮົາ,

ຊ່ອຍໃຫ້ເຮົາພັດທະນາຄວາມອົດທົນ, ສັດທາ, ຄວາມອົດກັ້ນ, ແລະ ຄວາມຖ່ອມຕົວ.... ຜ່ານຄວາມໂສກເສົ້າ, ຄວາມທຸກຍາກ, ແລະ ຄວາມລຳບາກຍາກແຄ້ນ ເຮົາຈະໄດ້ຮັບການສຶກສາທີ່ເຮົາມາຢູ່ທີ່ນີ້ ເພື່ອຈະຮຽນຮູ້.”[1]

ແອວເດີ ຣໍເບີດ ດີ ແຮວ ໄດ້ ເວົ້າຄ້າຍໆກັນວ່າ:

“ຄວາມເຈັບປວດເຮັດໃຫ້ທ່ານມີຄວາມຖ່ອມຕົວ ຊຶ່ງເຮັດໃຫ້ທ່ານໄຕ່ຕອງ. ມັນເປັນປະສົບການທີ່ຂ້າພະເຈົ້າມີຄວາມກະຕັນຍູທີ່ອົດທົນມາ....

ຂ້າພະເຈົ້າໄດ້ ຮຽນຮູ້ວ່າຄວາມເຈັບປວດທາງດ້ານຮ່າງກາຍ ແລະ ການປິ່ນປົວຂອງຮ່າງກາຍ ຫລັງຈາກການຜ່າຕັດລາຍໃຫຍ່ຄ້າຍໆກັບຫລາຍກັບຄວາມເຈັບປວດທາງດ້ານວິນຍານ ແລະ ການປິ່ນປົວທາງຈິດວິນຍານໃນຂັ້ນຕອນຂອງການກັບໃຈ.”[2]

ຄວາມທຸກທໍລະມານສ່ວນຫລາຍຂອງເຮົາບໍ່ໄດ້ເປັນຄວາມຜິດຂອງເຮົາ. ເຫດການທີ່ບໍ່ຄາດຄິດ, ສະພາບການຂອງການຂັດແຍ້ງ ຫລື ການຜິດຫວັງ, ຄວາມເຈັບປ່ວຍທີ່ເກີດຂຶ້ນ, ແມ່ນແຕ່ຄວາມຕາຍທີ່ເກີດຂຶ້ນ ອ້ອມຂ້າງເຮົາ ແລະ ມີຜົນກະທົບກະເທືອນຕໍ່ປະສົບການໃນໂລກມະນຸດຂອງເຮົາ. ນອກຈາກນີ້, ເຮົາອາດທົນທຸກ ເພາະການກະທຳຂອງຄົນອື່ນ.[3] ລີໄຮໄດ້ສັງເກດເຫັນວ່າຢາໂຄບໄດ້ “ຮັບຄວາມເສົ້າສະຫລົດໃຈຫລາຍເພາະຄວາມຫຍາບຄາຍຂອງພວກອ້າຍຂອງ [ລາວ].”[4] ການຄັດຄ້ານເປັນສ່ວນໜຶ່ງໃນແຜນແຫ່ງຄວາມສຸກຂອງພຣະບິດາເທິງສະຫວັນ. ເຮົາທຸກຄົນປະເຊີນນຳມັນຢ່າງພຽງພໍທີ່ຈະເຮັດໃຫ້ເຮົາຮູ້ເຖິງຄວາມຮັກຂອງພຣະບິດາຂອງເຮົາ ແລະ

ຄວາມຕ້ອງການຂອງເຮົາທີ່ຈະຮັບເອົາຄວາມຊ່ອຍເຫລືອຂອງພຣະຜູ້ຊ່ອຍໃຫ້ລອດ.

ພຣະຜູ້ຊ່ອຍໃຫ້ລອດບໍ່ໄດ້ເປັນຜູ້ທີ່ສັງເກດເບິ່ງຢ່າງງຽບໆ.
ພຣະອົງຮູ້ດ້ວຍຕົວຂອງພຣະອົງເອງເຖິງຄວາມ ເຈັບປວດທີ່ເຮົາປະເຊີນ.

“ພຣະອົງໄດ້ຮັບຄວາມທຸກທໍລະມານຂອງຄວາມເຈັບປວດຂອງມະນຸດທັງປວງ,
ຄວາມເຈັບປວດຂອງທຸກສິ່ງທີ່ມີຊີວິດ, ທັງຊາຍ, ຍິງ, ແລະ ເດັກນ້ອຍ.”[5]

“ສະນັ້ນຂໍໃຫ້ເຮົາທັງຫລາຍຈົ່ງມີໃຈກ້າເຂົ້າມາເຖິງບ່ອນບັ່ງແຫ່ງພ
ຣະຄຸນເພື່ອເຮົາຈະມີຄວາມເມດຕາ, ແລະ ພົບເຫັນພະ
ຄຸນທີ່ຈະຊ່ອຍເຮົາໃນເວລາທີ່ເຮົາຕ້ອງການ.”[6]

ບາງຄັ້ງໃນຄວາມເຈັບປວດຢ່າງໜັກໜ່ວງ, ເຮົາຢາກຈະຖາມວ່າ,
“ບໍ່ມີຫວ້ານຢາທີ່ກີເລອາດບໍ; ບໍ່ມີໝໍຜູ້ໃດປິ່ນປົວໄດ້ບໍ?”[7]
ຂ້າພະເຈົ້າຂໍເປັນພະຍານວ່າຄຳຕອບແມ່ນ “ມີ”, ມີໝໍຢູ່ທີ່ນັ້ນ.
ການຊົດໃຊ້ຂອງ ພຣະເຢຊູຄຣິດຄອບຄຸມເຖິງບ່ອນໃຂເຫລົ່ານີ້ ແລະ
ຈຸດປະສົງຂອງຄວາມເປັນມະຕະຢ່າງຄົບຖ້ວນ.

ຍັງມີຄວາມເຈັບປວດອີກຢ່າງໜຶ່ງທີ່ເຮົາຈະຮັບຜິດຊອບ.
ຄວາມເຈັບປວດທາງວິນຍານມີຢູ່ໃນຈິດວິນຍານ ຂອງເຮົາ ແລະ
ອາດຈະຮູ້ສຶກຄືກັບວ່າລະງັບບໍ່ໄດ້, ແມ່ນແຕ່ເປັນດັ່ງ
“ຄວາມຍ້ານທີ່ບໍ່ອາດຈະ ພັນລະນາໄດ້” ດັ່ງທີ່ແອວມາໄດ້ອະທິບາຍ.[8]
ມັນມາຈາກການກະທຳບາບ ແລະ ການຂາດການກັບໃຈຂອງເຮົາ.
ສຳລັບຄວາມເຈັບປວດນີ້ມີຢາປິ່ນປົວແບບທຳມະດາ ແລະ ແນ່ນອນ.
ມັນມາຈາກພຣະບິດາ, ຜ່ານພຣະບຸດ, ແລະ

ມີໃຫ້ສຳລັບເຮົາແຕ່ລະຄົນຜູ້ທີ່ເຕັມໃຈເຮັດ
ທຸກຢ່າງທີ່ຈຳເປັນເພື່ອກັບໃຈ. ພຣະຄຣິດໄດ້ກ່າວວ່າ,
“ເຈົ້າຈະບໍ່ຫັນກັບມາຫາເຮົາ... ແລະ ປ່ຽນໃຈເຫລື້ອມໃສບໍ
ເພື່ອເຮົາຈະຮັກສາເຈົ້າ?”[9]

ພຣະຄຣິດພຣະອົງເອງໄດ້ສອນວ່າ:

“ແລະ ພຣະບິດາຂອງເຮົາຈຶ່ງສົ່ງເຮົາມາ ເພື່ອເຮົາຈະໄດ້ຖືກຍົກຂຶ້ນ ເທິງໄມ້ກາງແຂນ ແລະ ຫລັງຈາກທີ່ເຮົາຖືກຍົກຂຶ້ນເທິງກາງແຂນແລ້ວ ເພື່ອເຮົາຈະໄດ້ດຶງມະນຸດທັງປວງມາຫາເຮົາ....
ສະນັ້ນ, ຕາມ*ອຳນາດ*ຂອງພຣະບິດາ ເຮົາຈະດຶງມະນຸດທັງປວງມາຫາເຮົາ.”[10]

ບາງທີວຽກງານອັນສຳຄັນທີ່ສຸດຂອງພຣະອົງເປັນວຽກງານທີ່ຕ້ອງເຮັດ ຕໍ່ໄປຢ່າງບໍ່ຢຸດຢັ້ງກັບເຮົາແຕ່ລະຄົນເປັນສ່ວນຕົວ, ເພື່ອຈະຍົກ, ເພື່ອໃຫ້ພອນ, ເພື່ອເສີມສ້າງ, ເພື່ອສະໜັບສະໜູນ, ເພື່ອນຳພາ ແລະ ເພື່ອໃຫ້ອະໄພເຮົາ.

ດັ່ງທີ່ນີໄຟໄດ້ເຫັນໃນພາບທີ່ມາໃຫ້ເຫັນ, ພາລະກິດຂອງພຣະຄຣິດໃນໂລກມະນຸດສ່ວນຫລາຍແມ່ນທຸ້ມເທໃຫ້ແກ່ການໃຫ້ພອນ ແລະ ການປິ່ນປົວຜູ້ເຈັບປ່ວຍດ້ວຍພະຍາດຕ່າງໆ---ທາງຮ່າງກາຍ, ທາງຄວາມຮູ້ສຶກ ແລະ ທາງວິນຍານ. “ແລະ ຂ້າພະເຈົ້າເຫັນຝູງຄົນຜູ້ເຈັບປ່ວຍ ແລະ ຜູ້ທຸກທໍລະມານດ້ວຍ ໂຣກນາງຊະນິດ.... ແລະ ຄົນເຫລົ່ານັ້ນ ໄດ້ຮັບການຮັກສາໂດຍອຳນາດຂອງລູກແກະຂອງພຣະເຈົ້າ.”[11]
ແອວມາໄດ້ພະຍາກອນນຳອີກວ່າ “ພຣະອົງຈະອອກໄປ, ທົນຄວາມເຈັບປວດ ແລະ ຄວາມທຸກທໍລະມານ ແລະ ການລໍ້ລວງທຸກຢ່າງ;
ແລະ...ພຣະອົງຈະຮັບເອົາຄວາມເຈັບປວດ ແລະ ຄວາມປ່ວຍໄຂ້ຂອງຜູ້ຄົນຂອງພຣະອົງ....

"ເພື່ອອຸທອນຂອງພຣະອົງຈະເຕັມໄປດ້ວຍຄວາມເມດຕາ...ເພື່ອພຣະອົງຈະຮູ້
ຕາມທາງ
ແຫ່ງເນື້ອໜັງວ່າຈະຊ່ວຍຜູ້ຄົນຂອງພຣະອົງຕາມຄວາມອ່ອນແອຂອງເຂົາ
ໄດ້ຢ່າງໃດ."[12]

ຕອນເດິກຂອງຄືນວັນໜຶ່ງ, ຂະນະທີ່ນອນຢູ່ຕຽງຂອງໂຮງໝໍ,
ຕອນນີ້ເປັນຄົນໄຂ້ບໍ່ແມ່ນເປັນນາຍໝໍ,
ຂ້າພະເຈົ້າໄດ້ອ່ານຂໍ້ພຣະຄຳພີເຫລົ່ານັ້ນຊ້ຳແລ້ວຊ້ຳອີກ."
ຂ້າພະເຈົ້າໄດ້ໄຕ່ຕອງວ່າ, "ສິ່ງນີ້ເປັນໄປໄດ້ແນວໃດ? ເພື່ອໃຜ?
ເຮັດແນວໃດເພື່ອຈະໄດ້ຮັບ? ຈະຄືກັນກັບການໃຫ້ອະໄພບາບບໍ?
ເຮົາຈະຕ້ອງເຮັດໃຫ້ພຣະອົງຮັກເຮົາ ແລະ ຊ່ວຍເຫລືອເຮົາບໍ?" ຂະນະທີ່
ຂ້າພະເຈົ້າໄຕ່ຕອງ, ຂ້າພະເຈົ້າໄດ້ເຂົ້າໃຈວ່າ ໃນພຣະຊົນຊີບມະຕະ
ພຣະຄຣິດໄດ້ເລືອກທີ່ຈະປະສົບກັບຄວາມເຈັບປວດ ແລະ ຄວາມທຸກທໍລະມານ
ເພື່ອຈະເຂົ້າໃຈເຮົາ.
ບາງທີ່ເຮົາກໍຄືກັນຕ້ອງປະສົບການກັບຄວາມເລິກຊຶ້ງ ຂອງຄວາມ
ເປັນມະຕະ ເພື່ອຈະເຂົ້າໃຈພຣະອົງ ແລະ ຈຸດປະສົງນິລັນດອນຂອງເຮົາ.

ປະທານເຮັນລີ ບີ ໄອລິງ ໄດ້ສອນວ່າ: "ມັນຈະເຮັດ
ໃຫ້ເຮົາສະບາຍໃຈເມື່ອເຮົາຕ້ອງລໍຖ້າດ້ວຍຄວາມ ທຸກໃຈ
ເຖິງການບັນເທົາທຸກທີ່ພຣະຜູ້ຊ່ວຍໃຫ້ລອດໄດ້ສັນຍາໄວ້ທີ່ພຣະອົງ
ຮູ້ຈັກວິທີທີ່ຈະຮັກສາ ແລະ
ຊ່ວຍເຫລືອເຮົາຈາກປະສົບການຂອງພຣະອົງ.... ແລະ ສັດທາໃນອຳນາດນັ້ນ
ຈະເຮັດໃຫ້ເຮົາມີຄວາມອົດທົນເມື່ອເຮົາອະທິຖານ ແລະ ເຮັດວຽກ ແລະ
ລໍຮັບຄວາມຊ່ວຍເຫລືອນັ້ນ. ພຣະອົງຮູ້ໄດ້ ໂດຍການເປີດເຜີຍວ່າ
ຈະຊ່ວຍເຮົາແນວໃດ, ແຕ່ພຣະອົງໄດ້ເລືອກທີ່ຈະຮຽນຮູ້ໂດຍທາງ
ປະສົບການສ່ວນຕົວຂອງພຣະອົງເອງ."[14]

ຂ້າພະເຈົ້າໄດ້ຮູ້ສຶກເຖິງ “ອ້ອມແຂນແຫ່ງຄວາມຮັກຂອງພຣະອົງ” ໃນຄືນນັ້ນ.[15] ນ້ຳຕາໄຫລອາບໝອນ ດ້ວຍຄວາມຮູ້ສຶກບຸນຄຸນ. ຕໍ່ມາ, ເມື່ອຂ້າພະເຈົ້າອ່ານໃນ ມັດທາຍ ກ່ຽວກັບພາລະກິດໃນໂລກມະນຸດ ຂອງພຣະຄຣິດ, ຂ້າພະເຈົ້າໄດ້ຄົ້ນພົບອີກຢ່າງໜຶ່ງວ່າ,
“ເມື່ອເຖິງຍາມແລງ ປະຊາຊົນນຳບັນດາຄົນຜີສິງ ມາຫາພຣະເຢຊູ...ແລະ ພຣະອົງ...ປິ່ນປົວຜູ້ເຈັບໄຂ້ໄດ້ປ່ວຍ*ທຸກຄົນ*ໃຫ້ຫາຍດີ.”[16]
ພຣະອົງໄດ້ປິ່ນປົວ *ທຸກຄົນ*ທີ່ໄດ້ມາຫາພຣະອົງ.
ບໍ່ມີໃຜຖືກປະຕິເສດ.
ດັ່ງທີ່ແອວເດີ ດາລິນ ເອັຈ ໂອກ ໄດ້ສອນວ່າ:
“ພອນຂອງການປິ່ນປົວມາຈາກຫລາຍວິທີທາງ, ແຕ່ລະວິທີທາງ ກໍເໝາະສົມກັບຄວາມຕ້ອງການຂອງເຮົາ,
ດັ່ງທີ່ເປັນທີ່ຮັບຮູ້ສຳລັບພຣະອົງຜູ້ຮັກເຮົາທີ່ສຸດ.
ບາງຄັ້ງການປິ່ນປົວ ຈະເຮັດໃຫ້ພະຍາດເຮົາຫາຍດີ ຫລື ຍົກພາລະໄປຈາກເຮົາ. ແຕ່ບາງຄັ້ງເຮົາຈະຖືກປິ່ນປົວໂດຍການໃຫ້ກຳລັງ ຫລື ຄວາມເຂົ້າໃຈ ຫລື ຄວາມອົດທົນ
ເພື່ອຈະແບກພາລະທີ່ວາງຢູ່ຕໍ່ໜ້າເຮົາ.”[17] ພຣະເຢຊູຈະ ໂອບກອດທຸກຄົນທີ່ມາຫາພຣະອົງ.[18] ຈິດວິນຍານທັງໝົດສາມາດ ໄດ້ຮັບການປິ່ນປົວໄດ້ດ້ວຍອຳນາດຂອງພຣະອົງ. ຄວາມເຈັບປວດ ທັງໝົດຈະສາມາດຖືກບັນເທົາລົງໄດ້. ໃນພຣະອົງ, ຈິດວິນຍານຂອງເຮົາຈະ ໄດ້ພົບການພັກຜ່ອນ.[19]
ສະພາບການແຫ່ງຄວາມມະຕະຂອງເຮົາອາດຈະບໍ່ປ່ຽນແປງໃນທັນທີ, ແຕ່ຄວາມເຈັບປວດ, ຄວາມກັງວົນ, ຄວາມທຸກທໍລະມານ, ແລະ ຄວາມຢ້ານກົວຂອງເຮົາຈະໝົດສິ້ນໄປໃນຄວາມສະຫງົບ ແລະ ຫອ້ານຢາ ທີ່ປິ່ນປົວຂອງພຣະອົງ.

ຂ້າພະເຈົ້າໄດ້ສັງເກດເຫັນວ່າຕາມທຳມະຊາດແລ້ວ
ເດັກນ້ອຍມັກຈະຍອມຮັບຄວາມເຈັບປວດ ແລະ ຄວາມທຸກທໍລະມານໄດ້ດີ.
ພວກເຂົາອົດທົນຢ່າງງຽບໆດ້ວຍຄວາມຖ່ອມຕົວ ແລະ ຄວາມອ່ອນໂຍນ.
ຂ້າພະເຈົ້າໄດ້ຮູ້ສຶກເຖິງວິນຍານທີ່ສວຍງາມ ແລະ
ໜ້າຮັກຢູ່ອ້ອມຂ້າງຂອງເດັກນ້ອຍເຫລົ່ານີ້.

ຍິ່ງໜຸ່ມຜູ້ໜຶ່ງອາຍຸ 13 ປີຊື່ ເຊີຣີໄດ້ຮັບການຜ່າຕັດ
ເນື້ອງອກໃນກະດູກສັນຫລັງເປັນເວລາ 14 ຊົ່ວໂມງ.
ເມື່ອນາງຮູ້ສຶກຕົວໃນຫ້ອງຄົນເຈັບໜັກ, ນາງໄດ້ເວົ້າວ່າ "ພໍ່,
ປ້າແຊຣອນຢູ່ທີ່ນີ້, ແລະ... ພໍ່ຕູ້ນໍແມນ ແລະ
ແມ່ຕູ້ບຣາວກໍຢູ່ທີ່ນີ້. ພໍ່ເອີຍໃຜຢືນຢູ່ຂ້າງພໍ່?
ລາວຄ້າຍຄືກັນກັບພໍ່ ແຕ່ສູງກວ່າ. ລາວວ່າລາວຊື່ ຈິມມີ
ອ້າຍຂອງພໍ່." ລຸງຈິມມີຂອງນາງໄດ້ຕາຍຕອນອາຍຸ 13 ປີດ້ວຍໂຣກໃນ
ເສັ້ນປະສາດ.

"ເປັນເວລາເກືອບໜຶ່ງຊົ່ວໂມງ,
ທີ່ນາງເຊີຣີບັນຍາຍເຖິງຄົນທີ່ມາຢ້ຽມຢາມນາງ, ທັງໝົດເປັນສະມາຊິກ
ຂອງຄອບຄົວທີ່ລ່ວງລັບໄປແລ້ວ. ດ້ວຍຄວາມອ່ອນເພຍນາງຈຶ່ງຫລັບໄປ."

ຕໍ່ມານາງບອກພໍ່ຂອງນາງວ່າ, "ພໍ່ເອີຍ,
ເດັກນ້ອຍທຸກຄົນໃນຫ້ອງຄົນເຈັບໜັກມີທູດສະຫວັນ
ເບິ່ງແຍງພວກເຂົາ."[20]
ຕໍ່ພວກເຮົາທຸກຄົນພຣະອົງໄດ້ກ່າວວ່າ: "ຈົ່ງເບິ່ງ,
ເຈົ້າເປັນເດັກນ້ອຍໆ ແລະ ເຈົ້າຈະທົນທຸກສິ່ງບໍ່ໄດ້ຂະນະນີ້;
ເຈົ້າຕ້ອງເຕີບໂຕໃນພຣະຄຸນ ແລະ ໃນຄວາມຮູ້ເລື່ອງຄວາມຈິງ.
ເດັກນ້ອຍຢ່າເປັນຫ່ວງ ເພາະເຈົ້າເປັນຂອງເຮົາ ... ດັ່ງນັ້ນ,
ເຮົາຢູ່ທ່າມກາງເຈົ້າ ແລະ ເຮົາຄືຜູ້ລ້ຽງແກະທີ່ດີ."[21]

ການທ້າທາຍສ່ວນຕົວທີ່ສຳຄັນຂອງເຮົາໃນໂລກມະຕະນີ້ຄື ການເປັນ "ໄພ່ພົນຜ່ານການຊົດໃຊ້ຂອງ ພຣະຄຣິດ."[22] ຄວາມເຈັບປວດທີ່ທ່ານ ແລະ ຂ້າພະເຈົ້າປະສົບອາດເປັນການອັກແທກຂອງ ຂັ້ນຕອນນີ້ໄດ້ດີທີ່ສຸດ. ໃນຄວາມຍາກລຳບາກທີ່ສຸດ, ໃນໃຈຂອງເຮົາຈະກາຍເປັນເໝືອນດັ່ງເດັກນ້ອຍ, ຖ່ອມຕົນ, ແລະ "ອະທິຖານ ແລະ ເຮັດວຽກ ແລະ ລໍຖ້າ"[23] ຢ່າງອົດທົນສຳລັບການປິ່ນປົວຮ່າງກາຍ ແລະ ຈິດວິນຍານຂອງເຮົາ. ເຊັ່ນດຽວກັນກັບໂຢບ, ຫລັງຈາກໄດ້ຮັບການຫລໍ່ຫລອມຜ່ານການທົດສອບຂອງເຮົາ, ເຮົາຈະ "ເປັນຢ່າງທອງຄຳ."[24]

ຂ້າພະເຈົ້າຂໍເປັນພະຍານວ່າພຣະອົງເປັນພຣະຜູ້ໄຖ່ຂອງເຮົາ, ເປັນເພື່ອນຂອງເຮົາ, ເປັນຜູ້ວິງວອນ ແທນເຮົາ, ເປັນທ່ານໝໍຜູ້ຍິ່ງໃຫຍ່, ເປັນຜູ້ປິ່ນປົວຢ່າງຊ່ຽວຊານ. ໃນພຣະອົງເຮົາຈະສາມາດພົບ ຄວາມສະຫງົບສຸກ ແລະ ການປອບໂຍນຈາກຄວາມເຈັບປວດ ແລະ ບາບຂອງເຮົາ ຖ້າເຮົາພຽງແຕ່ມາຫາພຣະອົງດ້ວຍໃຈທີ່ອ່ອນໂຍນ. "ພຣະຄຸນຂອງພະອົງພຽງພໍ."[25]

ໃນພຣະນາມຂອງພຣະເຢຊູຄຣິດ, ອາແມນ.

ແຫລ່ງອ້າງອີງ


1. Orson F. Whitney, in Spencer W. Kimball, *Faith Precedes the Miracle* (1972), 98.

2. Robert D. Hales, "Healing Soul and Body," *Ensign,* Nov. 1998, 14.

3. ແອວມາ 31:31, 33.

4. 2 ນີໄຟ 2:1.

5. 2 ນີໄຟ 9:21.

6. ເຮັບເລີ 4:16.


ໂປໂລສອນເຮົາໃຫ້ເບິ່ງພຣະຜູ້ຊ່ອຍໃຫ້ລອດເປັນຕົວຢ່າງໃນການເຮັດນຳ

“ການຄັດຄ້ານຂອງຄົນເຮັດບາບຕໍ່ [ເຮົາ], ຢ້ານວ່າ [ເຮົາ] ຈະທໍ້ຖອຍ ແລະ ໝົດກຳລັງ” (ເຮັບເລີ 12:3).

7. ເຢເຣມີຢາ 8:22.

8. ແອວມາ 36:14.

9. 3 ນີໄຟ 9:13.

10. 3 ນີໄຟ 27:14–15; ໂຕເນີ້ງຖືກຕື່ມໃສ່.

11. 1 ນີໄຟ 11:31.

12. ແອວມາ 7:11–12; ໂຕເນີ້ງຖືກຕື່ມໃສ່.

13. See John Taylor, *The Mediation and Atonement* (1882), 97. ປະທານເທເລີ ຂຽນກ່ຽວກັບ “ພັນທະສັນຍາ” ວ່າເປັນຄຳສັນຍາລະຫວ່າງພຣະບິດາ ແລະ ພຣະບຸດໃນສະພາ ຢູ່ໂລກກ່ອນເກີດ ເພື່ອຄວາມສຳເລັດຜົນຂອງການຊົດໃຊ້ແທນມວນມະນຸດ. ການອາສາສະໝັກຂອງພຣະອົງທີ່ຈະທົນທຸກທໍລະມານຕອນມີຊີວິດຢູ່ໃນໂລກເປັນສິ່ງຕື່ມເຕີມໃສ່ກັບການຮັບທຸກທໍລະມານຢູ່ໃນສວນ ແລະ ຢູ່ເທິງໄມ້ກາງແຂນ (ເບິ່ງໂມໄຊຢາ 3:5–8).

14. Henry B. Eyring, “Adversity,” *Liahona* and *Ensign,* May 2009; ໂຕເນີ້ງຖືກຕື່ມໃສ່.

15. See Doctrine and Covenants 6:20.

16. ມັດທາຍ 8:16; ໂຕເນີ້ງຖືກຕື່ມໃສ່.

17. Dallin H. Oaks, “He Heals the Heavy Laden,” *Liahona* and *Ensign,* Nov. 2006, 7–8.

18. ມໍມອນ 5:11.

19. ມັດທາຍ 11:29.

20. See Michael R. Morris, “Sherrie’s Shield of Faith,” *Ensign*, June 1995, 46.

21. See Doctrine and Covenants 50:40–41, 44.

22. Mosiah 3:19.

22. ໂມໄຊຢາ 3:19.

23. Henry B. Eyring, *Liahona* and *Ensign,* May 2009, 24.

24. ໂຢບ 23:10.

25. ເບ ິ ່ງ 2 ໂກຣ ິນໂທ 12:9; see Ether 12:26–27; Doctrine and Covenants 18:31.